ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 04 /ຈຂອປ

ອັດຕະປື, ວັນທີ 11 ກຸມພາ 2019

# ຄຳສັ່ງ

## ວ່າດ້ວຍການຈັດຕັ້ງປະຕິບັດການກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍໃນ ທົ່ວແຂວງອັດຕະປື

- ອີງຕາມ: ກົດໝາຍປົກຄອງທ້ອງຖິ່ນແຫ່ງ ສປປລາວ, ສະບັບເລກທີ 68 / ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ໜັງສືສະເໜີ ຂອງພະແນກສາທາລະນະສຸກແຂວງ ສະບັບເລກທີ 32 /ສທຂ, ລົງວັນທີ 28 ມັງກອນ 2019.

ເນື່ອງຈາກສະພາບການປ່ຽນແປງຂອງດິນຟ້າອາກາດ ເຮັດໃຫ້ສິ່ງແວດລ້ອມເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວຂອງພະຍາດໄຂ້ຍຸງລາຍ ອັນເປັນສາເຫດເຮັດໃຫ້ເກີດການລະບາດຂອງພະຍາດໄຂ້ຍຸງລາຍສູງຂຶ້ນ.

ເພື່ອສະກັດກັ້ນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ, ຫຼຸດຜ່ອນການເຈັບເປັນ ແລະ ການເສຍຊີວິດຂອງນັກຮຽນ,ພະນັກງານ ແລະ ປະຊາຊົນບັນດາເຜົ່າ ທີ່ຖືກກະທົບຍ້ອນພະຍາດໄຂ້ຍຸງລາຍ ເຊິ່ງພະແນກສາທາລະນະສຸກແຂວງ ໄດ້ຕິດຕາມ ແລະ ເຝົ້າລະວັງ ພ້ອມດ້ວຍມາດຕະການໃນການຕອບໂຕ້ຕ່າງໆ ກໍ່ຍັງເຫັນວ່າ ໂຕເລກການເຈັບເປັນຍ້ອນພະຍາດໄຂ້ຍຸງ ຍັງມີທ່າອ່ຽງ ເພີ່ມຂຶ້ນເລື້ອຍໆ ເພື່ອເຮັດໃຫ້ບັນຫາດັ່ງກ່າວ ໄດ້ຮັບການແກ້ໄຂຢ່າງທັນການ ແລະ ໄດ້ຮັບຜົນດີ, ບັນດາອົງການຈັດຕັ້ງພາກລັດ ແລະ ເອກະຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນ ຕ້ອງມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນຂະບວນການກຽມພ້ອມຕອບໂຕ້ຕໍ່ການລະບາດຂອງພະຍາດໄຂ້ຍຸງລາຍຢ່າງຈິງຈັງ.

**ເຈົ້າແຂວງໆອັດຕະປືອອກຄຳສັ່ງແນະນຳ:**

1. ມອບໃຫ້ພະແນກສາທາລະນະສຸກແຂວງ, ພະແນກສຶກສາທິການ ແລະ ກິລາແຂວງ, ພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ເຈົ້າເມືອງ 05 ຕົວເມືອງ ຊີ້ນຳ-ນຳພາ ຈັດຕັ້ງປະຕິບັດວຽກງານກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍໃນທົ່ວແຂວງໃຫ້ໄດ້ຮັບໝາກຜົນ.
2. ມອບໃຫ້ພະແນກສາທາລະນະສຸກແຂວງ ປະສານກັບ ພະແນກສຶກສາທິການ ແລະ ກິລາແຂວງ, ພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ເຈົ້າເມືອງ 05 ຕົວເມືອງກຳນົດຫຼັກການ, ວິທີການ, ສ້າງກົນໄກ, ການປະສານງານ ແລະ ລາຍງານ ໃນການຈັດຕັ້ງປະຕິບັດກິດຈະກຳການກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ ໃນທົ່ວແຂວງ.

3. ມອບໃຫ້ພະແນກສາທາລະນະສຸກແຂວງ, ເຈົ້າເມືອງ 05 ຕົວເມືອງ ຊີ້ນຳ-ນຳພາ ສ້າງຂະບວນການໃນການຈັດຕັ້ງປະຕິບັດກິດຈະກຳ ກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນເອງຢ່າງເປັນປົກກະຕິ.

4. ມອບໃຫ້ເຈົ້າເມືອງ 05 ຕົວເມືອງ ຊີ້ນຳ ອົງການຈັດຕັ້ງຂັ້ນບ້ານທຸກຂັ້ນ ຕະຫຼອດຮອດພໍ່ແມ່ປະຊາຊົນເປັນເຈົ້າການໃນການສ້າງຂະບວນການ ກວດກາ, ທຳລາຍແຫຼ່ງເພາະພັນຂອງໜອນນ້ຳຍຸງລາຍ ໃນບ້ານເຮືອນຂອງຕົນ, ສະຖານທີ່ລວມຊຸມນຸມຕ່າງໆ ທຸກໆອາທິດ ໃຫ້ເປັນປົກກະຕິ ແລະ ລາຍງານໃຫ້ຂັ້ນເທິງທີ່ຮັບຜິດຊອບຮັບຊາບ ໂດຍການປະຕິບັດ 5 ປໍ່ຄື:

   1) ປິດ: ປິດຝາຊະນະທີ່ເກັບນ້ຳໃນເຮືອນ ແລະ ນອກເຮືອນ ເພື່ອບໍ່ໃຫ້ຍຸງມາໄຂ່ໃສ່.
   2) ປ່ຽນ: ປ່ຽນນ້ຳ ແລະ ຜັດຖູພາຊະນະເຊັ່ນ: ເຕົ້າດອກໄມ້, ໂຖນ້ຳຮອງຕີນຕູ້, ຖາດຮອງຈອກ .....
   3) ປ່ອຍ: ປ່ອຍປາຫາງນົກຍຸງ ເພື່ອກິນໜອນນ້ຳ.
   4) ປັບປຸງ: ປັບປຸງບໍ່ໃຫ້ມີນ້ຳຂັງກະໂປະ, ກະປ໋ອງ, ຮາງລິນ, ຢາງຕີນລົດເກົ່າ, ເຕົ້າດອກໄມ້ ແລະ ສິ່ງແວດລ້ອມອ້ອມຂ້າງ.
   5) ປະຕິບັດ: ປະຕິບັດໃຫ້ເປັນນິໄສ ເປັນປະຈຳທຸກໆອາທິດ.

5. ໃຫ້ບັນດາທ່ານເຈົ້າເມືອງ 05 ຕົວເມືອງ, ຄະນະກຳມະການຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ຂັ້ນແຂວງ, ຂັ້ນເມືອງ, ບ້ານ, ຊີ້ນຳ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບັນດາອົງການຈັດຕັ້ງທຸກພາກສ່ວນ ພາຍໃນແຂວງ, ເມືອງ, ບ້ານ ເພື່ອເຂົ້າຮ່ວມຂະບວນການແກ້ໄຂວຽກງານດັ່ງກ່າວ ດ້ວຍຄວາມຮັບຜິດຊອບສູງ.

6. ມອບໃຫ້ພະແນກການອ້ອມຂ້າງແຂວງ,ອົງການທຽບເທົ່າຂັ້ນແຂວງ, ເຈົ້າເມືອງ 05 ຕົວເມືອງ, ຄະນະກຳມະການທຸກຂັ້ນ ຕະຫຼອດຮອດພໍ່ແມ່ປະຊາຊົນ ໃນທົ່ວແຂວງ ຈົ່ງພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ ຈຶ່ງໃດ້ອອກຄຳສັ່ງແນະນຳສະບັບນີ້ເພື່ອນຳໄປຜັນຂະຫຍາຍ ແລະ ພ້ອມກັນຈັດຕັ້ງປະຕິບັດວຽກງານກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ ໃຫ້ສຳເລັດຕາມລະດັບຄາດໝາຍ.

**ເຈົ້າແຂວງ**

ເລັດ ໄຊຍະພອນ